ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງລະບົບຊໍາລະສະສາງ

ເລກທີ 889 /ຄລຊ

ນະຄອນຫຼວງວຽງຈັນ, ວັນທີ 03 ພະຈິກ 2020

# ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດທີ່ຢູ່ໃນ ສປປ ລາວ.

**ເລື່ອງ:** ການນໍາໃຊ້ເຄື່ອງພີໂອເອສ (Point of Sale: POS) ໃນການຮັບຊໍາລະຄ່າສິນຄ້າ ແລະ ບໍລິການໃນ ສປປ ລາວ.

- ອີງຕາມກົດໝາຍວ່າດ້ວຍ ລະບົບການຊໍາລະ ສະບັບເລກທີ 32/ສພຊ, ລົງວັນທີ 7 ພະຈິກ 2017;
- ອີງຕາມກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມແຈ້ງການ ສະບັບເລກທີ 1279/ຄລຊ, ລົງວັນທີ 12 ພະຈິກ 2019.

ກົມຄຸ້ມຄອງລະບົບຊໍາລະສະສາງ (ຄລຊ), ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງບັນດາທະນາຄານທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ຊາບກ່ຽວກັບການນໍາໃຊ້ເຄື່ອງພີໂອເອສ (Point of Sale: POS) ໃນການຮັບຊໍາລະຄ່າສິນຄ້າ ແລະ ບໍລິການໃນ ສປປ ລາວ ເພື່ອໃຫ້ມີຄວາມເປັນເອກະພາບ, ສົ່ງເສີມການນໍາໃຊ້ເງິນກີບ, ຫຼຸດຜ່ອນການນໍາໃຊ້ເງິນສົດ ແລະ ຄຸ້ມຄອງການນໍາໃຊ້ເງິນຕາຕ່າງປະເທດພາຍໃນປະເທດ ຊຶ່ງມີລາຍລະອຽດດັ່ງນີ້:

1. ທະນາຄານທີ່ໃຫ້ບໍລິການຮັບຊໍາລະ (Acquirer) ສາມາດຮັບຊໍາລະເປັນສະກຸນເງິນກີບ ຫຼື ສະກຸນເງິນຕາຕ່າງປະເທດໄດ້, ແຕ່ການຈ່າຍເງິນໃຫ້ກັບຮ້ານຄ້າທີ່ຮັບຊໍາລະຕໍ່ຈາກ ທະນາຄານທີ່ໃຫ້ບໍລິການຮັບຊໍາລະ (Acquirer) ຕ້ອງເປັນສະກຸນເງິນກີບເທົ່ານັ້ນ ໂດຍໄດ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນມາ;
2. ການນໍາໃຊ້ເຄື່ອງພີໂອເອສ ແມ່ນເພື່ອຮັບຊໍາລະຄ່າສິນຄ້າ ແລະ ບໍລິການເທົ່ານັ້ນ;
3. ຫ້າມບໍ່ໃຫ້ທະນາຄານທີ່ໃຫ້ບໍລິການຮັບຊໍາລະ (Acquirer) ນໍາໃຊ້ເຄື່ອງພີໂອເອັສເປັນເຄື່ອງມືໃນການແລກປ່ຽນເງິນຕາຕ່າງປະເທດໃຫ້ແກ່ລູກຄ້າ ຫຼື ນໍາໃຊ້ຕາມວັດຖຸປະສົງອື່ນທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍທີ່ ທຫລ ວາງອອກໃນແຕ່ລະໄລຍະ;
4. ກໍລະນີ ພົບເຫັນການເຄື່ອນໄຫວທີ່ບໍ່ສອດຄ່ອງກັບແຈ້ງການສະບັບນີ້ ຜູ້ໃຫ້ບໍລິການຊໍາລະ ຕ້ອງລາຍງານມາຍັງ ທຫລ, ທະນາຄານທີ່ໃຫ້ບໍລິການຮັບຊໍາລະ (Acquirer) ທີ່ລະເມີດແຈ້ງການສະບັບນີ້ ຈະຖືກດໍາເນີນມາດຕະການຕາມລະບຽບການຂອງ ທະນາຄານແຫ່ງ ສປປ ລາວ ວາງອອກແຕ່ລະໄລຍະ.

ແຈ້ງການສະບັບນີ້ປ່ຽນແທນ ແຈ້ງການສະບັບເລກທີ 1279/ຄລຊ, ລົງວັນທີ 12 ພະຈິກ 2019.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ແທນ ຫົວໜ້າກົມ

ລຳພອນ ສິມມະໄລວົງ